# ປະມວນກົດໝາຍແພ່ງແມ່ນຫຍັງ?

**ເປັນຫຍັງ ຄົນເຮົາໃນສັງຄົມຕ້ອງຮູ້ ປະມວນກົດໝາຍແພ່ງ?**

ການຮູ້ປະມວນກົດໝາຍແພ່ງແມ່ນສິ່ງທີ່ຈຳເປັນສຳລັບຄົນໃນສັງຄົມ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນ, ເພື່ອບໍ່ໃຫ້ບຸກຄົນອື່ນເອົາລັດເອົາປຽບ. ປະມວນກົດໝາຍແພ່ງເປັນບ່ອນອີງໃຫ້ກັບທຸກຄົນໃນການດຳລົງຊີວິດປະຈຳວັນ ແລະ ຖ້າຄົນໃນສັງຄົມ ຫາກຮູ້ປະມວນກົດໝາຍແພ່ງແລ້ວ ກໍຈະຮູ້ຈັກສິດ ແລະ ພັນທະຂອງພົນລະເມືອງ

**ປະມວນກົດໝາຍແພ່ງມີໂຄງສ້າງຄືແນວໃດ? ມີຈັກມາດຕາ?**

ປະມວນກົດໝາຍແພ່ງທີ່ສ້າງຂຶ້ນປະກອບດ້ວຍ IX ພາກຄື:

- ພາກທີ I: ບົດບັນຍັດທົ່ວໄປ
- ພາກທີ II: ບຸກຄົນ ແລະ ນິຕິບຸກຄົນ
- ພາກທີ III: ຄອບຄົວ
- ພາກທີ IV: ຊັບ, ກຳມະສິດ ແລະ ສິດອື່ນຕໍ່ຊັບ
- ພາກທີ V: ຂໍ້ຜູກພັນໃນສັນຍາ
- ພາກທີ VI: ຂໍ້ຜູກພັນນອກສັນຍາ
- ພາກທີ VII: ການຄ້ຳປະກັນ
- ພາກທີ VIII: ການສືບທອດມູນມໍຣະດົກ
- ພາກທີ IX: ບົດບັນຍັດສຸດທ້າຍ

ໃນຈຳນວນ IX ພາກປະກອບດ້ວຍ 630 ມາດຕາ ແລະ ບັນດາທ່ານສາມາດອ່ານ ແລະ ດາວໂຫຼດເອກະສານໄດ້.

ສະແກນ QR Code » « ເພື່ອເຂົ້າອ່ານ ແລະ ດາວໂຫຼດເກັບໄວ້

ນອກຈາກນີ້ທ່ານຍັງສາມາດອ່ານປະມວນກົດໝາຍແພ່ງ ແລະ ກົດໝາຍອື່ນໆ ທຸກບ່ອນທຸກເວລາ ຈາກແອັບ » Lao Law « ທ່ານສາມາດດາວໂຫຼດໄດ້ທີ່: App Store / Google play

**ປະມວນກົດໝາຍແພ່ງແມ່ນຫຍັງ?**

ປະມວນກົດໝາຍແພ່ງແມ່ນການລວບລວມເອົາບັນດາບົດບັນຍັດຂອງກົດໝາຍເຂົ້າເປັນສະບັບດຽວ ຢ່າງເປັນລະບົບກ່ຽວກັບ ການເກີດ, ການປ່ຽນແປງ ແລະ ການສິ້ນສຸດ ສິດ ແລະ ພັນທະ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃນສາຍພົວພັນທາງແພ່ງ ເຊັ່ນ ຊັບ, ກຳມະສິດ, ຄອບຄົວ, ຂໍ້ຜູກພັນໃນສັນຍາ, ຂໍ້ຜູກພັນນອກສັນຍາ, ມູນມໍຣະດົກ.

**ປະມວນກົດໝາຍແພ່ງມີປະໂຫຍດຕໍ່ການດຳລົງຊີວິດຂອງຄົນໃນສັງຄົມຄືແນວໃດ?**

ປະມວນກົດໝາຍແພ່ງເປັນບ່ອນອີງໃຫ້ແກ່ຄົນໃນສັງຄົມ ໃນການແກ້ໄຂຂໍ້ຂັດແຍ່ງທາງແພ່ງ, ເປັນພື້ນຖານໃນການປົກປ້ອງສິດ ແລະ ຜົນປະໂຫຍດຂອງຄົນທີ່ຖືກລະເມີດຈາກບຸກຄົນອື່ນ.

**ປະມວນກົດໝາຍແພ່ງຈະຖືກນຳໃຊ້ກັບໃຜ?**

ປະມວນກົດໝາຍແພ່ງຈະຖືກນຳໃຊ້ກັບບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ. ສຳລັບບຸກຄົນປະມວນກົດໝາຍແພ່ງ ຈະຖືກນຳໃຊ້ແຕ່ເວລາເກີດອອກມາມີຊີວິດ ຈົນຮອດເວລາເສຍຊີວິດ.

ສະແກນ QR Code ເພື່ອຮັບຊົມວິດີໂອນຳສະເໜີ **ປະມວນກົດໝາຍແພ່ງແມ່ນຫຍັງ?**



### ການເກີດ

ເມື່ອເດັກເກີດມາມີຊີວິດກໍມີຄວາມສາມາດທາງດ້ານກົດໝາຍ. ເພື່ອໃຫ້ເກີດຄວາມສາມາດທາງດ້ານກົດໝາຍ ຕາມທີ່ໄດ້ກຳນົດໄວ້ໃນພາກທີ II. ພໍ່ແມ່ຈຳເປັນຕ້ອງໄປຈົດທະບຽນການເກີດ ຕາມທີ່ໄດ້ກຳນົດໄວ້ໃນພາກທີ III.



### ການຊື້ຂາຍສິດນຳໃຊ້ທີ່ດິນ

ການຊື້ຂາຍແມ່ນສັນຍາປະເພດໜຶ່ງກຳນົດໄວ້ໃນພາກທີ V. ຜູ້ຊື້ ແລະ ຜູ້ຂາຍຕ້ອງມີຄວາມສາມາດທາງດ້ານການປະພຶດຕາມທີ່ໄດ້ກຳນົດໄວ້ໃນພາກທີ II.



### ການຈົດທະບຽນທີ່ດິນ

ການຈົດທະບຽນ ທີ່ດິນ ທີ່ຖືກຕ້ອງຈະພາໃຫ້ໄດ້ກຳມະສິດ ລາຍລະອຽດແມ່ນກຳນົດໄວ້ໃນພາກທີ IV.

### ການຈຳນອງ

ໃນການກູ້ຢືມເງິນນຳທະນະຄານ ໂດຍເອົາທີ່ດິນໄປຈຳນອງ. ໃນນີ້ການກູ້ຢືມແມ່ນສັນຍາອັນໜຶ່ງ ແລະ ການຈຳນອງແມ່ນສັນຍາອີກອັນໜຶ່ງ. ການຈຳນອງຈະພາໃຫ້ມີບຸລິມະສິດ ລາຍລະອຽດແມ່ນກຳນົດໄວ້ໃນພາກທີ VII




### ອຸປະຕິເຫດ

ອຸປະຕິເຫດສ້າງຄວາມເສຍຫາຍຕໍ່ຊັບ, ຊີວິດ, ສຸຂະພາບ ແລະ ຈິດໃຈ ເຊິ່ງເອີ້ນວ່າ ຄວາມຮັບຜິດຊອບທາງແພ່ງ, ໃຜຈະຮັບຜິດຊອບໃຊ້ແທນຄ່າເສຍຫາຍແນວໃດ ແມ່ນໄດ້ກຳນົດໄວ້ໃນພາກທີ VI




### ມູນມໍຣະດົກ

ການສືບທອດມູນມໍຣະດົກຕ້ອງຕ້ອງມີການເສຍຊີວິດ, ມີມູນມໍຣະດົກ, ມີຜູ້ສືບທອດມູນມໍຣະດົກ ສ່ວນລະບຽບ ແລະ ຂັ້ນຕອນແມ່ນກຳນົດໄວ້ໃນພາກທີ VIII.



### ການແຕ່ງດອງ

ການແຕ່ງດອງຈະພາໃຫ້ເກີດສິດ ແລະ ພັນທະໃໝ່ ເຊັ່ນ ມີສິດຕາງໜ້າເຊິ່ງກັນ ແລະ ກັນ, ມີພັນທະເບິ່ງແຍງລ້ຽງດູລູກ, ຮັບຜິດຊອບໜີ້ສິນຮ່ວມກັນ ສ່ວນລາຍລະອຽດແມ່ນກຳນົດໄວ້ໃນພາກທີ III.

